**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສຶກສາທິການ ແລະ ກິລາ

ຫ້ອງການ

ເລກທີ 1128 / ຫກ

ນະຄອນຫຼວງວຽງຈັນ, ວັນທີ 24 ເມສາ 2025

# ໜັງສືເຊີນເຂົ້າຮ່ວມປະມູນ

1. ກະຊວງສຶກສາທິການ ແລະ ກິລາ ໄດ້ນໍາໃຊ້ເງິນງົບປະມານລັດ ປະຈໍາປີ 2025 ເພື່ອດໍາເນີນການປະມູນເປີດກວ້າງພາຍໃນ ກ່ຽວກັບການຈັດຊື້ອຸປະກອນກິລາ, ຊຸດກິລາ ຮັບໃຊ້ການຝຶກຊ້ອມ ແລະ ແຂ່ງຂັນ ໃຫ້ຄະນະນໍາ, ຄູຝຶກ ແລະ ນັກກິລາ ເຂົ້າຮ່ວມແຂ່ງຂັນກິລານັກຮຽນອາຊຽນ ຄັ້ງທີ 14 ປີ 2025 ທີ່ປະເທດບຣູໄນດາລູຊາລາມ;
2. ການປະມູນຈະດໍາເນີນຕາມຂັ້ນຕອນ ການປະມູນເປີດກ້ວາງພາຍໃນປະເທດ ທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍວ່າດ້ວຍ ການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະຄໍາແນະນໍາກ່ຽວກັບການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ຜູ້ປະມູນຕ້ອງມີສໍາເນົາເອກະສານໃບອະນຸຍາດດໍາເນີນທຸລະກິດດ້ານການສະໜອງເຄື່ອງກິລາ ແລະເຄື່ອງໃຊ້ຫ້ອງການ ແລະ ໃບມອບພັນທະອາກອນ ປະຈໍາປີ 2024 ທີ່ຖືກຕ້ອງຕາມກົດໝາຍ;
4. ບໍລິສັດທີ່ມີເງື່ອນໄຂເໝາະສົມ ແລະ ມີຄວາມສົນໃຈສາມາດຕິດຕໍ່ພົວພັນ ແລະ ເຮັດໜັງສືເຈດຈໍານົງຊື້ເອກະສານປະມູນໄດ້ທີ່ ພະແນກບໍລິຫານ ແລະ ຄົ້ນຄວ້າສັງລວມ ກົມກິລາມວນຊົນ, ພະລະ ແລະ ສິລະປະສຶກສາ ກະຊວງສຶກສາທິການ ແລະ ກິລາ ໂທລະສັບ 021 216017, 020 98983434 ໃນໂມງລັດຖະການ, ເລີ່ມຂາຍຊອງປະມູນວັນທີ 05 ພຶດສະພາ 2025 ເປັນຕົ້ນໄປ, ໃນລາຄາ 500.000 ກີບ/ຊອງ, ຈໍານວນເງິນດັ່ງກ່າວ ຈະບໍ່ມີການສົ່ງຄືນ (ວິທີຊໍາລະຕ້ອງຈ່າຍເປັນເງິນສົດ);
5. ຊອງປະມູນຕ້ອງສົ່ງກ່ອນເວລາ 10:00 ໂມງ ຂອງວັນທີ 09 ມິຖຸນາ 2025 ທີ່ຫ້ອງປະຊຸມກົມກິລາມວນຊົນ, ພະລະ ແລະ ສິລະປະສຶກສາ ຊັ້ນ 04 (ຫ້ອງ 414) ຕຶກກະຊວງສຶກສາທິການ ແລະ ກິລາ, ເຂດສະໜາມກິລາເຈົ້າອານຸວົງ. ຊອງປະມູນໃດສົ່ງຊ້າເກີນເວລາທີ່ກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ, ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາດຽວກັນໂດຍຊ້ອງໜ້າຄະນະກໍາມະການຈັດຊື້ກະຊວງສຶກສາທິການ ແລະ ກິລາ, ຕາງໜ້າກະຊວງການເງິນ ແລະ ຕົວແທນຂອງຜູ້ເຂົ້າຮ່ວມແຂ່ງຂັນປະມູນທີ່ສົນໃຈເຂົ້າຮ່ວມ;
6. ຜູ້ປະມູນຕ້ອງມີເງິນຄໍ້າປະກັນຊອງປະມູນໃນອັດຕາ 2% ຂອງມູນຄ່າທີ່ສະເໜີໃນການປະມູນ ເປັນໜັງສືຄໍ້າປະກັນ ຈາກທະນາຄານ.

ເຊັນແທນ. **ຫົວໜ້າຫ້ອງການ**

ພົນມະແສງ ທິບພະວົງ

สแกนด้วย CamScanner